**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດ ຂອງພະຍາດ COVID-19

ເລກທີ 3053 /ສພກ

ນະຄອນຫຼວງວຽງຈັນ, ວັນທີ 14 ຕຸລາ 2020

# ຄຳແນະນຳ

## ກ່ຽວກັບການປະຕິບັດມາດຕະການຜ່ອນຜັນ ການຈຳກັດບໍລິເວນຜູ້ທີ່ເດີນທາງມາຈາກປະເທດທີ່ບໍ່ມີ ການລະບາດພະຍາດ COVID-19 ໃນຊຸມຊົນ

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19, ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1049/ຫສນຍ, ລົງວັນທີ 30 ກັນຍາ 2020;
- ອີງຕາມ ຜົນກອງປະຊຸມຂອງກອງເລຂາຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19, ຄັ້ງວັນທີ 07 ຕຸລາ 2020;

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ອອກຄຳແນະນຳ ສຳລັບຜູ້ທີ່ຈະເດີນທາງມາຈາກປະເທດທີ່ບໍ່ມີການລະບາດຂອງພະຍາດ COVID-19 ໃນຊຸມຊົນ ດັ່ງລຸ່ມນີ້:

1. ຕ້ອງມີໃບຢັ້ງຢືນຜົນກວດ COVID-19 ພາຍໃນ 72 ຊົ່ວໂມງ ກ່ອນການເດີນທາງ, ເວລາເຂົ້າມາຕ້ອງໄດ້ກວດຫາເຊື້ອ ແລະ ຈຳກັດບໍລິເວນຢູ່ສະຖານທີ່ ທີ່ຄະນະສະເພາະກິດກຳນົດໄວ້ ເພື່ອລໍຖ້າຜົນກວດ 48 ຊົ່ວໂມງ ຫຼື ຈົນກວ່າໄດ້ຮັບຜົນກວດ. ຄະນະສະເພາະກິດຈະພິຈາລະນາ ຕາມສະພາບການລະບາດຂອງປະເທດຕົ້ນທາງ ເພື່ອອະນຸຍາດໃຫ້ໄປສືບຕໍ່ຈຳກັດບໍລິເວນຢູ່ເຮືອນ, ສະຖານທີ່ເຮັດວຽກ ຫຼື ໂຮງແຮມ ຈົນຄົບ 14 ວັນ.

**ກ. ກໍລະນີບໍ່ພົບເຊື້ອ:**

- ສຳລັບພົນລະເມືອງລາວ: ເມື່ອໄດ້ຮັບອະນຸຍາດໃຫ້ໄປສືບຕໍ່ຈຳກັດບໍລິເວນຢູ່ເຮືອນຂອງຕົນແລ້ວ ມອບໃຫ້ອົງການປົກຄອງທ້ອງຖິ່ນ, ຄອບຄົວ ຮັບຜິດຊອບຕິດຕາມ ໃຫ້ຜູ້ກ່ຽວປະຕິບັດຕາມຄຳແນະນຳ ຂອງຄະນະສະເພາະກິດວາງອອກ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ຈົນຄົບ 14 ວັນ ເປັນຕົ້ນ: ຕິດຕາມແທກອຸນຫະພູມແຕ່ລະວັນ, ໝັ່ນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມືຂ້າເຊື້ອ, ບໍ່ໃຫ້ເດີນທາງອອກໄປຂ້າງນອກ, ບໍ່ໃຫ້ໃກ້ຊິດກັບຄົນອື່ນ, ຮັກສາມາລະຍາດໃນການໄອ ແລະ ຈາມ, ເປີດປ່ອງຢ້ຽມ ເພື່ອລະບາຍອາກາດພາຍໃນຫ້ອງໃຫ້ຖ່າຍເທ, ຖ້າວ່າຮູ້ສຶກບໍ່ສະບາຍ ໃຫ້ໂທຫາສາຍດ່ວນ 165, 166;

- ສໍາລັບຄົນຕ່າງປະເທດ: ເມື່ອໄດ້ຮັບອະນຸຍາດໃຫ້ໄປສືບຕໍ່ຈໍາກັດບໍລິເວນຢູ່ເຮືອນພັກຂອງຕົນ, ສະຖານທີ່ເຮັດວຽກ ຫຼື ໂຮງແຮມ, ຖ້າບ່ອນເຮັດວຽກບໍ່ແອອັດ ແມ່ນອະນຸຍາດໃຫ້ເຮັດວຽກໄດ້ ມອບໃຫ້ບໍລິສັດຮັບຜິດຊອບຕິດຕາມ ແລະ ລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ເປັນແຕ່ລະໄລຍະ, ໃຫ້ພວກກ່ຽວປະຕິບັດຕາມຄໍາແນະນໍາ ຂອງຄະນະສະເພາະກິດວາງອອກ ຢ່າງຖືກຕ້ອງ ແລະ ເຂັ້ມງວດຈົນຄົບ 14 ວັນ ເປັນຕົ້ນ: ຕິດຕາມແທກອຸນຫະພູມແຕ່ລະວັນ, ໝັ່ນລ້າງມືດ້ວຍນໍ້າສະອາດ ໃສ່ສະບູ ຫຼື ເຈວລ້າງມືຂ້າເຊື້ອ, ບໍ່ໃຫ້ເດີນທາງອອກໄປຂ້າງນອກ, ບໍ່ໃຫ້ໃກ້ຊິດກັບຄົນອື່ນ, ຮັກສາມາລະຍາດໃນການໄອ ແລະ ຈາມ, ເປີດປ່ອງຢ້ຽມ ເພື່ອລະບາຍອາກາດພາຍໃນຫ້ອງໃຫ້ຖ່າຍເທ, ຖ້າວ່າຮູ້ສຶກບໍ່ສະບາຍ ໃຫ້ໂທຫາສາຍດ່ວນ 165, 166;
- ສໍາລັບນັກທ່ອງທ່ຽວເປັນກຸ່ມ: ຕ້ອງມີເອກະສານຢັ້ງຢືນການຈໍາກັດບໍລິເວນ 14 ວັນ ແລະ ໃບຢັ້ງຢືນຜົນກວດ COVID-19 ພາຍໃນ 72 ຊົ່ວໂມງ ກ່ອນການເດີນທາງຈາກປະເທດຕົ້ນທາງ, ຖ້າກວດບໍ່ພົບເຊື້ອ ສາມາດໄປທ່ອງທ່ຽວຕາມແຜນການທ່ອງທ່ຽວທີ່ໄດ້ກໍານົດໄວ້ ໂດຍມອບໃຫ້ສະມາຄົມ ແລະ ບໍລິສັດທ່ອງທ່ຽວ ຕິດຕາມ ໃຫ້ພວກກ່ຽວປະຕິບັດຕາມຄໍາແນະນໍາ ຂອງຄະນະສະເພາະກິດວາງອອກຢ່າງຖືກຕ້ອງ ແລະ ເຂັ້ມງວດ.

ຂ. **ກໍລະນີພົບເຊື້ອ:** ທຸກຄົນທີ່ເດີນທາງເຂົ້າມາ ສປປ ລາວ ຖ້າກວດພົບເຊື້ອ ຈະຖືກນໍາສົ່ງໄປແຍກປ່ຽວ ແລະ ປິ່ນປົວ ຢູ່ໂຮງໝໍທີ່ໄດ້ກໍານົດໄວ້.

2. ຜູ້ເດີນທາງຈາກປະເທດ ທີ່ມີລາຍງານການລະບາດຂອງ COVID-19 ໃນຊຸມຊົນ ແມ່ນໃຫ້ຈໍາກັດບໍລິເວນ ຢູ່ສະຖານທີ່ ຄະນະສະເພາະກິດໄດ້ກໍານົດໄວ້ຈົນຄົບ 14 ວັນ.

ຄໍາແນະນໍາສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີສະບັບໃໝ່ປ່ຽນແທນ.

**ຮອງລັດຖະມົນຕີ**
**ຮອງຫົວໜ້າຄະນະສະເພາະກິດ**
**ຜູ້ປະຈໍາການ**

ກະຊວງ ສາທາລະນະສຸກ
ລັດຖະມົນຕີ

**ຮອງສາດສະດາຈານ ດຣ.ພູທອນ ເມືອງປາກ**